ສິງແກ້ວ

໑໘ ກຸມພາ ໘໐໐໐

# ທາງດິນແດງ ໑

ທີ່ແຄມຂອງ ຫຼຽວໄປທາງຫນ້າ ເຫັນຕາເວັນຂ້ອນຄ່ອຍຕ່ຳລົງ ແສງຕາເວັນສີແດງແສດ ດັ່ງດອກຝາງສາດໃສ່ຫົວພູຝາກຊຽງຂອງ ຫົວວຽງເບື້ອງນັ້ນ, ຂີ້ເຝື້ອຖືກລົມຍູ້ ກຳລັງໄຫຼເປັນຫມູ່ ຕິດລຽງກັນໄປທາງທິດຕາເວັນຕົກຜູ້ນ, ພວກນົກ ກໍພາກັນບິນໄປເປັນຫມູ່ ຄືງຊອກຄືນສູ່ ເຮືອນຮັງ, ລຳນ້ຳຂອງໄຫຼຜ່ານທາງຫນ້າ ສຽງນ້ຳຕ້ອງໃສ່ຫນ້າຜານັນເນືອງນອງ ຂຶ້ນມາຮອດ ເທິງພື້, ເຂດຫົວດອນປູ່ງ ເຊິ່ງແມ່ນດອນທີ່ຕັ້ງຢູ່ກາງ ນ້ຳຂອງລະຫວ່າງ ເມືອງຫ້ວຍຊາຍ ແລະ ເມືອງຊຽງຂອງ ປະເທດໄທ, ຖືກນ້ຳເດືອນແປດໄຫຼຖ້ວມໄປຫມົດແລ້ວ ເຫຼືອພຽງທາງເທິງ ດອນພີ້ ມີປ່າຫຍ້າເລົາຂຽວລໍຖ້ານ້ຳຂອງ ທີ່ກຳລັງໄຫຼນອງຂຶ້ນມາຖ້ວມ. ຝົນຫາກໍເຊົາຕົກ ອາຍອາກາດອັນອົບເອົ້າກິ່ນ ຂີ້ດິນ ພັດສາດສະບັດມາໃສ່ຫນ້າສອນໄຊເປັນເທື່ອ ໆ.

ສອນໄຊນັ່ງຢູ່ຕີນລະບຽງໂຮງການເມືອງ ຫຼຽວເບິ່ງພາບທາງຫນ້າ ຢ່າງຄົນໄຮ້ວິນຍານ ພວກເຮົາບໍ່ສາມາດຈະເດົາຄວາມຄຶດ ຂອງສອນໄຊໃນເວລານັ້ນໄດ້. ແມ່ນແຕ່ຕົວລາວເອງກໍບໍ່ ຮູ້ວ່າ ລາວຄວນຈະແຍງເບິ່ງຄວາມງາມຂອງທຳມະຊາດ ທີ່ກຳລັງເປັ່ງຣັສມີ ຫຼືວ່າ ລາວກຳລັງ ຄຶດຮອດຫາຫມູ່ຄູ່ຊາວລາວ ໄທຫ້ວຍຊາຍທັງຫຼາຍທີ່ ພາກັນເຕັ້ນໂຕນໂຍນຫນີໄປຊຸກ ຫົວນອນແຊ່ຢູ່ຄ້າຍອົພຍົບທີ່ຊຽງຂອງ ຫຼືວ່າ ລາວເອງກໍກຳລັງນັ່ງ ຄຶດຄືພວກປະຕິການເລົ່ານັ້ນທີ່ຢາກຈະຫນີຈາກປິຕຸພູມ ຫຼື ຫນີຈາກການປົກຄອງໃຫມ່ ຄືກັບຊາວລາວ ໃນສູນອົພຍົບຝາກນັ້ນ. ຕາມທຳມະດາຜູ້ຢາກຫນີ ເຂົາບໍ່ກ້າມານັ່ງເບິ່ງແຄມຂອງດັ່ງນີ້ດອກ ເພາະຢ້ານຫມູ່ຄູ່ຜູ້ຫົວ ກ້າວຫນ້າເຂົາຈະສົງໃສ ຢ້ານພວກກອງຫຼອນຈະຈັບໄປສໍ້ສືບຖາມ ຫາວ່າຊອກຫາແຄມທ່າ ເພື່ອຈະລອຍຂ້າມ ຢ້ານພໍ່ແມ່ສົງໃສວ່າ ລູກເຕົ້າຈະຫນີປະ ສ້າງຄວາມບໍ່ສະບາຍໃຈແກ່ຄອບຄົວ ລ້າ ໆ.

ສອນໄຊຫາກໍກັບຈາກວຽງຈັນ ມາຢາມພໍ່ແມ່ເວລາພັກຮ້ອນທີ່ຫວ້ຍຊາຍ, ແຕ່ຄວາມຈິງ ມັນບໍ່ແມ່ນພັກຮ້ອນດອກ ມັນແມ່ນພັກລະດູຝົນຫຼາຍກວ່າ, ການພັກຜ່ອນປີນີ້ ມັນສົມຄວນແກ່ສອນໄຊຫຼາຍ ເນື່ອງຈາກການປ່ຽນແປງລະບົບການປົກຄອງໃຫມ່ ທາງໂຮງຮຽນກໍມີ ການຈັດຕັ້ງ ຈັກແມ່ນສະມາຄົມຊາວຫນຸ່ມລາວ ຈັກແມ່ນ ກອງຫຼອນຈັກແມ່ນຄຸ້ມບ້ານ ແລະ ຫຼາຍອົງການ ຈົນບໍ່ສາມາດນັບໄດ້ຖ້ວນ, ເພິ່ນເອີ້ນມັນວ່າ ແມ່ນຕາຫນ່າງ ການປົກຄອງໃຫມ່

ແຕ່ລະອາທິດ ຕ້ອງໄດ້ປະຊຸມສ່ອງແສງເຊິ່ງກັນ ແລະ ກັນ ແລ້ວເລືອກຜູ້ທີ່ກ້າວຫນ້າ ກວ່າຫມູ່ ໃຫ້ເປັນຕົວດີ ແລະ ຕົວເດັ່ນ. ຕົວດີຫຼາຍ ຕົວເດັ່ນຫຼາຍ ກາຍເປັນຕົວໂດດໄປ ກໍມີ ຫຼາຍຈົນນັບບໍ່ຖ້ວນ, ໃນຫົວຂອງສອນໄຊ ກຳລັງມີຫຼາຍ ຄວາມຄຶດທີ່ເຂົ້າມາປະສົມປະສານກັນ.

ບາດລ້ຽວໃຫມ່ນີ້ ສອນໄຊຕ້ອງໃຊ້ແຮງກາຍ ແລະ ແຮງສມອງຢ່າງຫນັກ ແຮງກາຍ ນອກຈາກການຮ່ຳຮຽນແລ້ວ ຕ້ອງໄດ້ເຮັດສວນປູກຜັກ ລ້ຽງສັດຢູ່ຫຼັງບ້ານ ເພື່ອຊ່ອຍກຸ້ມຕົນເອງ ຊ້ຳບໍ່ແລ້ວຕ້ອງເຮັດ ສວນສາມັກຄີຕື່ມອີກ ຄ່ຳມາ ທາງຫົວຫນ້າຄຸ້ມ ຊ້ຳຈັດໃຫ້ໄປຍາມຊ່ອຍພວກກອງຫຼອນ ເພາະຫວ່າງສອງສາມເດືອນກ່ອນນີ້ ພວກນັກໂທດ ຢູ່ຄຸກ ສຳເດ້ ພາກັນແຫກຄຸກ ຈຳນວນມາກມາຍ ເຮັດໃຫ້ບ້ານເມືອງວຸ້ນວາຍກັນໄປຫຼາຍເຕີບ, ເບິ່ງທາງການປົກຄອງ ໃຫມ່ ດູປາກ ເປັນພະ ຫາກໃຈເປັນມານ ຂົ່ມຂູ່ຜູ້ຄົນທີ່ກະທຳຜິດ ແນວທີ່ບໍ່ຖືກນະໂຍບາຍໃຫມ່ ຈະຖືກຈັບໄປສຳມະນາທີ່ ດອນທ້າວ ດອນນາງ ແບບບໍ່ມີປີ່ມີຂຸ່ຍ ເດິກຕອນເຊົ້າ ກ່ອນໄກ່ ກໍມີພວກຫົວຫນ້າຄຸ້ມ ຂີ່ມຂວາຍ ແລະ ຕຳຣວດເມືອງມາ ປຸກ ແລະ ຖືກຈັບໄປໂດຍບໍ່ມີການ ພິຈາຣະນາໂທດຈາກສານເລີຍ ບາງຄົນທີ່ຖືກຈັບໄປ ກໍຮອດບໍ່ຮູ້ວ່າຖືກຈັບໄປຍ້ອນ ຫຍັງ. ບາງ ຄົນກໍຊິງຖືກຫາເຣື່ອງ ໃສ່ຈາກຫມູ່ຄູ່ທີ່ອິດສາ ຈາກລູກນ້ອງເກົ່າ ທີ່ແຄ້ນເຣື່ອງເກົ່າເຣື່ອງຫຼັງ ແລະ ຮ້ອຍແປດ ພັນປະການ.

ເຮັດໃຫ້ສອນໄຊ ໃຊ້ສມອງພິຈາຣະນາເບິ່ງເຫດການ, ທັງທາງໂຮງຮຽນ ເພິ່ນກໍປະກາດ ວ່ານັກສຶກສາເຂດ ວຽງຈັນ ເກົ່າຈະຕ້ອງມີຄະແນນຄຸນສົມບັດ, ແມ່ນຄະແນນການເມືອງ, ຕ້ອງໄດ້ກາຍແປດສ່ວນສິບຈຶ່ງຈະສາມາດ ຂໍທຶນໄປຮຽນ ຕ່າງປະເທດໄດ້. ເບິ່ງຫມູ່ຄູ່ບາງຄົນຜູ້ ທີ່ເຄີຍກິນສຸກກິນດິບນຳກັນ ມາແຕ່ສມັຍຮຽນແຕ່ ຫ້ອງມັທຍົມ ນຶ່ງມານຳກັນ ຄືງຢ້ານບໍ່ໄດ້ ຄະແນນການເມືອງດີ ພາກັນດີ້ນຣົນຊອກຕິຕຽນສ່ອງແສງ ຊອມຈັບຜິດຫມູ່ຄູ່ຢູ່ ຕະລອດ ເວລາ ຈົນເຮົາ ຕົບບ່າທ້ວງກໍບໍ່ໄດ້ ເພາະເພິ່ນເປັນຫົວຫນ້າຄວາມສົງບ ບໍ່ແມ່ນລະດັບດຽວ ກັບເຮົາແລ້ວ ເຮົາຈະຕ້ອງໃຫ້ ຄວາມນັບຖື. ເຮັດໃຫ້ສອນໄຊຄຶດບໍ່ຖືກວ່າເຫດການທຸກມື້ນີ້ ແມ່ນ ວິທີການເປັນຢູ່ທີ່ ເພິ່ນຈະສ້າງ ໃຫ້ເປັນສັງຄົມລາວ ເລີຍບໍ່ ? ຫຼືວ່າ ເພິ່ນເຮັດແນວນີ້ ຍ້ອນມັນ ແມ່ນຫົວລ້ຽວຫົວຕໍ່ ຫຼື ບາດລ້ຽວໃຫມ່ຄືເຂົາພາເວົ້າ ເພາະຣັຖບານ ຫາກໍ່ຕັ້ງ ຫວ່າງ ວັນທີ ໔ ທັນວາ ໑໙໗໕ ຫວ່າງເຈັດແປດເດືອນ ແລ້ວນີ້ ?

ດອກເກດມະນີ ຍິງສາວລູ້ນນ້ອງ ທີ່ມີເຮືອນຢູ່ຕີນພູວັດ ຂ້າງໂຮງຮຽນບໍ່ແກ້ວ ກໃດ້ຍິນ ຂ່າວ ວ່າລາວຫນີໄປ ທັງຄອບຄົວກ່ອນເດືອນກຸມພາພູ້ນ, ເພາະຕອນນັ້ນທາງຣັຖບານເກນ ເອົາຂ້າຣາຊການໄປຮ່ຳຮຽນການເມືອງ ທາງ ເຂດຫຼວງນ້ຳທາພຸ້ນ. ພໍ່ແມ່ຂອງດອກເກດມະນີ ເປັນຄົນໄທເຫນືອ ແຕ່ກ່ອນເຄີຍຢູ່ທາງຊຳເຫນືອພູ້ນ, ພວກນີ້ສ່ວນຫຼາຍ ເຂົາເຈົ້າເວົ້າວ່າ ເຄີຍເຫັນແມງຄອມມູຍນິສແລ້ວ ພ້ອມທັ່ງເຄີຍຊີມຣົດຊາດມາແລ້ວ

ຈຶ່ງພາກັນເຕັ້ນໂຕນໂຍນ ຫນີກ່ອນ ເຮັດແບບນີ້ກໍເຮັດໃຫ້ຜູ້ອື່ນຕື່ນເຕັ້ນ ບໍ່ເຂົ້າໃຈເຫດການຊື່ໆດອກ, ທັງດ້ານວິທະຍຸໄທ ແລະ ສຽງອະເມຣິກາ ກໍອອກຂ່າວ ທຸກມື້ວ່າ ທາງປະເທດຂະເມນ ເຂົາເກນຊາວບ້ານຊາວເມືອງ ໃຫ້ອອກຈາກເມືອງເກືອບຫມົດແລ້ວ, ທາງລູງພູມີ ວົງວິຈິດ ກໍກ່າວຄໍາປາໃສ ທາງວິທຍຸແຫ່ງຊາດ ວ່າພວກປະຕິການ ຊອກເຣື່ອງຂຶ້ນມາເວົ້າເພື່ອສ້າງຄວາມ ວຸ້ນວາຍແກ່ ພວກເຮົາ ຊື່ໆດອກ. ໃຜຈະເຂົ້າມາປົກຄອງປະເທດແລ້ວ ຊໍ້າສ້າງຄວາມວຸ້ນວາຍໃຫ້ແກ່ປະຊາຊົນຕື່ມ ຂ່າວແຕ່ກ່ອນວ່າ ພວກແນວ ລາວ(ຮັກຊາດ) ຕັດມື ພວກທີ່ທາເລັບແດງ ຕັດຫົວພວກທີ່ຈິ່ງຜົມຍາວ ຈູດສົ້ງພວກ ທີ່ນຸ່ງແບບຂາບານ ຍິງຄົນທີ່ປາກ ຫນີຂ້າມຝັ່ງຂອງ ຍິງພວກຄົນ ມົ້ງຖິ້ມ ເປັນຄອບຄົວທີ່ເຂົາເຈົ້າຍ່າງມາຮອດເມືອງກາສີ ເພື່ອຈະຫນີໄປນໍາວັງປາວ ຢູ່ປະເທດໄທພຸ້ນ ຂ່າວອັນໃດກໍເປັນຕາຂົນຫົວລຸກ, ລູງພູມີເພິ່ນກໍເວົ້າວ່າແມ່ນ ຂ່າວເປົ່າປີວຂອງ ພວກປະຕິການຊອກ ຫາເຣື່ອງໃສ່ ເພື່ອສ້າງຄວາມບໍ່ອຸ່ນອ່ຽນ ແລະຄວາມບໍ່ສົງບໃຫ້ແກ່ປະຊາຊົນ ລາວຊື່ໆດອກ. ເພິ່ນເວົ້າກໍເປັນຕາຟັງ ເອົາແທ້ໆ. ຊໍ້າບໍ່ຫນໍາ ເພິ່ນຍັງເປີດອອກວິທຍຸແບບເປີດແລ້ວ ເປີດອີກເປັນ ຫ້າຫົກເທື່ອ ຟັງເທື່ອໃດກໍຮູ້ສຶກຊຶ້ງໃນ ຄໍາເວົ້າເພິ່ນ, ທາງສອນໄຊກໍພູມໃຈນໍາປະເທດເຈົ້າຂອງ ທີ່ຜູ້ໃຫຍ່ປົກຄອງປະເທດ ສາມາດພາກັນເຊົາເສິກເສືອເຫນືອໃຕ້ ໄດ້ ຕັ້ງແຕ່ເຊັນສັນຍາສົງບເສິກ ປີ ໑໙໗໓ ມາ ແຕ່ລະມື້ໄດ້ຍິນແຕ່ຂ່າວ ພວກມັກເສິກພາ ກັນລະເມີດ ສັນຍາ ລະເມີດ ເຂດແດນຫຼັກຫມາຍແບບນິສັຍນັກເລງ ມື້ໃດບໍ່ໄດ້ຕີຫົວຫມາ ມື້ໃດບໍ່ໄດ້ດ່າແມ່ເຈັກ ຊິງຊິນອນບໍ່ຫຼັບ ຊິງຊິກິນບໍ່ແຊບ. ໃຈນຶ່ງຂອງສອນໄຊຄຶດວ່າ ໃຜກໍດີເຂົ້າ ມາປົກຄອງເມືອງລາວ ແບບບໍ່ໃຫ້ມັນມີ ເສິກເສືອເຫນືອໃຕ້ ຄືແຕ່ກີ້ກໍພໍແລ້ວ. ຫມົດສ້ຽນ ຫນາມສົງຄາມແລ້ວ ຜູ້ປົກຄອງເພິ່ນຫາກຈະພາ ປະຊາຊົນສ້າງບ້ານສ້າງເມືອງ ເຮັດໃຫ້ປະຊາ ຊົນ ຊາວລາວ ໃຫ້ຢູ່ດີກິນດີ ແລະທຸກຄົນກໍຈະມີ ຄວາມສະບາຍໃນພາຍຫນ້າ. ແຕ່ສອນໄຊກໍຮູ້ສຶກ ມີຄວາມຄ້ອຍອົກຄ້ອຍໃຈ ທີ່ພວກຫມູ່ທີ່ເຄີຍຮໍ່າຮຽນນໍາກັນຢູ່ວຽງຈັນ ກໍພາກັນທະຍອຍ ຂ້າມຫນີໄປເມືອງໄທ ເຮັດຄືນິທານນົກຈອກນ້ອຍ ເກີດລູກຢູ່ປ່າຫຽ້າຄາສັນຍາສາບານ ກັນວ່າຈະຢູ່ ຈະກິນ ຈະສ້າງ ຈະຕາຍນໍາກັນ. ບາດໄຟໄຫມ້ປ່າມາແທ້ໆ ຊໍ້າໂດດ ບິນຫນີປະລູກ ປະເມັຽປະໃຫ້ໄຟໄຫມ້ຕາຍ. ຄືກັບພວກຫມູ່ຄູ່ ທີ່ຫນີຂ້າມນໍ້າຂອງໄປ ມັນຫນ້າເສັຽດາຍ ທີ່ພວກເຮົາ ບໍ່ເຕົ້າໂຮມກັນສ້າງສາປະເທດນໍາກັນ. ສ່ວນຜູ້ຢູ່ກໍບໍ່ຮູ້ວ່າອະນາຄົດ ຈະຕົກໄປ ໃນຮູບຮ່າງໃດແທ້.

ສິ່ງທີ່ເຮັດໃຫ້ ສອນໄຊຄ້ອຍໃຈແຮງ ແມ່ນການຫນີ ຂອງຄອບຄົວດອກເກດມະນີ ພໍ່ແມ່ລາວກໍ ເປັນພຽງຫົວຫນ້າຫ້ອງການປະຈໍາແຂວງເທົ່ານັ້ນ ກໍຄົງຈະບໍ່ມີ ຄວາມຜິດຮ້າຍແຮງ ເທົ່າພວກປະຕິການຫ້າສິບຄົນ ທີ່ຣັຖບານເພິ່ນຈະເອົາໂທດນໍາ, ສະນັ້ນ ເຂົາເຈົ້າບໍ່ຄວນ ຫນີໄປແບບນີ້ເລີຍ. ທຸກຄັ້ງທີ່ສອນໄຊ ກາຍໄປຫນ້າບ້ານທີ່ດອກເກດມະນີເຄີຍຢູ່ ສະຫາຍວັນນີ ເຊິ່ງເປັນຫົວຫນ້າກອງຫຼອນ ໄດ້ຍ້າຍເອົາຄອບຄົວລາວ ເຂົ້າໄປຢູ່ແທນແລ້ວ. ສອນໄຊອົດທີ່ຈະບໍ່ຫຼຽວເຂົ້າໄປໃນເຮືອນບໍ່ໄດ້, ຕູ້ ແລະ ຕັ່ງຮັບ ແຂກ ກໍຍັງຕັ້ງຢູ່ຄືເກົ່າ ແຕ່ເປັນຫຽັງ ເບິ່ງເຮືອນຄືຊຸບເຊົາເຫງົາໆແນວໃດແບບບໍ່ສາມາດ ທີ່ຈະອະທິບາຍໄດ້ ຫຼືວ່າ ແສງສີຣັສມີ ຂອງເຮືອນຖືກເຈົ້າ ຂອງບ້ານໄດ້ເກັບເອົາໄປນໍາບໍ່ ? ຫຼືວ່າ

ຍ້ອນຄວາມວັງເວງໃຈ ຂອງສອນໄຊເອງທີ່ເຮັດໃຫ້ ເບິ່ງຫັງກໍຄືໂສກເສົ້າ ເຫັງາໃຈໄປຫມົດທຸກຢ່າງ ? ແຕ່ກີ້ ຍ່າງມາທາງນີ້ ກໍບໍ່ເຄີຍ ກາຍໄປແບບນີ້ຈັກເທື່ອ. ເບິ່ງໄປທາງຫນ້າສອນໄຊ ຮູ້ສຶກວ່າທຸກຢ່າງກໍາລັງມົວເຂົ້າ, ລາວຈຶ່ງປຸກ ຕົນເອງໃຫ້ ອອກຈາກຄວາມເພີ້ຝັນ, ຮູ້ສຶກວ່າຂົນຕາ ຕົນເອງປຽກ ເຮັດໃຫ້ຂັດໆຫນ່ວຍຕາ ບໍ່ຮູ້ວ່າແມ່ນ ນໍ້າຕາທີ່ຄ້າງຢູ່ເບົ້າຕາ ແບບຈະລົ່ງອອກມາໃຫ້ມັນເລີກມັນແລ້ວກໍບໍ່ແມ່ນ ຫຼື ວ່າ ແມ່ນເມັດຝົນກໍາລັງຕົກມາຖືກຂົນ ຕາກໍບໍ່ຮູ້ ເພາະເມດຝົນ ຫ່າງໆກໍາລັງຕົກລົງມາ.

ສອນໄຊກັບມາຮູ້ເມື່ອຄືງ ອີກບາດນຶ່ງ ແມ່ນລາວກໍາລັງຍ່າງຢູ່ກາງທາງພີ້ແລ້ວ, ລາວຫຼຽວຂື້ນເບິ່ງຟ້າ ກໍຮູ້ສຶກ ມືດຄຶ້ມຂື້ນມາອີກແລ້ວ ຍິ່ງສ້າງບັນຍາກາດ ແບບເສົ້າຫມອງໃຫ້ແກ່ ສອນໄຊຕື່ມອີກ.

"ສອນໄຊ ໄປໃສມາ ? " ນ້າວຽງຮ້ອງໃສ່ລາວ " ກັບມາແຕ່ວຽງຈັນເທື່ອນີ້ ຄືບໍ່ມາຍາມນ້າ ແດ່ ? "

ນ້າວຽງ ແມ່ນນ້ອງສາວ ຂອງພໍ່ດອກເກດມະນີ ທີ່ຢູ່ເຮືອນຖັດບ້ານ ດອກເກດມະນີເກົ່າມາສາມຫຼັງ. ສ່ວນ ບ້ານຂອງສອນໄຊເອງແມ່ນ ຢູ່ທາງຫົວບ້ານພູ້ນ.

"ສະບາຍດີນ້າວຽງ ໄປຍ່າງຫຼີ້ນທາງໂຮງການເມືອງພູ້ນມາ. ຫາກໍມາຮອດພີ້ສອງສາມມື້ ບໍ່ທັນໄດ້ອອກໄປໃສ ມາໃສເທື່ອ ຈຶ່ງບໍ່ໄດ້ມາຢາມນ້າ." ສອນໄຊ ທັງເວົ້າຍ່າງເຂົ້າໄປຫານ້າວຽງ ເຊິ່ງຢືນຢູ່ຫນ້າບ້ານ.

"ນ້າພູຄໍາລາວບໍ່ຢູ່ບໍ່ ? " ສອນໄຊຖາມຂ່າວຫາຜົວຂອງນ້າວຽງ.

"ລາວໄປເຮັດສວນກັບພວກຊາວຫນຸ່ມລາວຢູ່ແຄມຂອງພຸ້ນເດ່. ຈັກຫນ່ອຍກໍຄືຈະ ຂື້ນມາແລ້ວ. ມື້ຫນ້າມີເວລາ ກໍມາຫຼີ້ນນໍາພວກນ້າແດ່ແມ໋, ກິນເຂົ້າ ນໍານ້າພູຄໍາ." ນ້າວຽງເຊື້ອເຊີນແບບນິໃສເດີມ ທັ້ງ ໆ ທຸກມື້ນີ້ ເຂົ້ານໍ້າຊາມປາ ທາງຕາຫນ່າງການ ເມືອງເພີ່ນຕອງ ເພີ່ນເຊີງ ໄວ້ຫມົດແລ້ວ.

ຫມູເຫັດເປັດໄກ່ຖືກເພີ່ນຂື້ນທະບຽນ ຕັ້ງຊື່ໃຫ້ມັນຫມົດທຸກໂຕແລ້ວ, ບັກໂຈກ ບັກ ໂຕ ບັກແຕ່ວ ແມ່ແກ່ວ ນາງລີ, ເພື່ອຈະຂ້າກິນແຕ່ລະໂຕ ກໍຕ້ອງໄປແຈ້ງ ທາງຂັ້ນຄຸ້ມ ຂັ້ນບ້ານ ແລະ ຂັ້ນຕາແສງກ່ອນ ຈຶ່ງສາມາດຂ້າສັດ ທີ່ເຮົາ ລ້ຽງກິນໄດ້ ຖ້າບໍ່ດັ່ງນັ້ນ ກໍຜິດນະໂຍບາຍເພີ່ນ. ມີຊີ້ນກິນກໍບໍ່ກ້າຟັກໃສ່ຂຽງ ຢ້ານໄທບ້ານຈະໄດ້ຍິນ ແລ້ວຫາເຣື່ອງ ວ່າເປັນປະຕິການຢູ່ກິນ ແບບເສຣີບີຣ໌ວ ກິນແຕ່ລາບແຕ່ກ້ອຍທຸກມື້. ເຂົ້າເຄື່ອງຂອງກິນ ນໍ້າຕານ ເກືອຕ້ອງໄປຊື້ຢູ່ສະ

ທະກອນເອົາ ໂດຍເພິ່ນກຳນົດຈຳນວນ ໃຫ້ແຕ່ລະຄອບຄົວ ມີສິດຊື້ ຫຼັງຈາກມີການຕັດຊາຍແດນ ໄທ-ລາວ, ເຮັດໃຫ້ເຮົາຮູ້ສຶກວ່າ ທຸກສິ່ງທຸກຢ່າງຂາດແຄນໄປຫມົດ.

"ຂອບໃຈນຳນ້າວຽງຫຼາຍໆແລ້ວ ມື້ຫນ້າຈະມາຫຼິ້ນນຳຊື່ໆດອກ ດື່ມນ້ຳຊາກາເຟກໍ ພໍແລ້ວ ນ້າວຽງບໍ່ຕ້ອງຊອກຍຸ້ງຍາກນຳແທ້ໆເນີ."

ສອນໄຊຕອບນ້າວຽງແບບ ເຂົ້າໃຈບັນຫາແຕ່ລະຄອບຄົວດີ. ພວກລູກນ້າວຽງອາຍຸປະ ມານສາມ ແລະ ຫ້າປີ ພາກັນແລ່ນມາເກາະສິ້ນແມ່ເຂົາທັງແຫງນເບິ່ງຫນ້າສອນໄຊ ເຮັດໃຫ້ຄຳ ຖາມທີ່ກັ້ນໄວ້ໃນໃຈແຕ່ທຳອິດ ຢາກຮູ້ ຂ່າວຂອງດອກເກດມະນີ ລະເບີດອອກມາຢ່າງບໍ່ມີ ຄວາມອາຍ ເພາະກ່ອນນັ້ນເດັກນ້ອຍພວກນີ້ແມ່ນ ດອກເກດ ມະນີເປັນຜູ້ເບິ່ງແຍງເຂົາແທນ ນ້າວຽງເປັນປະຈຳ.

"ນ້າວຽງກໄດ້ຂ່າວ ຂອງຄອບຄົວດອກເກດແດ່ບໍ່ ? "

"ກໍພໍໄດ້ຂ່າວເຂົາເຈົ້າຢູ່, ຫວ່າງລ້າສຸດໄດ້ຍິນວ່າ ເຂົາເຈົ້າພາກັນໄປເຊົ່າເຮືອນຢູ່ຊຽງຮາຍພູ້ນເດ່... ດອກເກດໄປຂາຍປຶ້ມຢູ່ຮ້ານເຮັງຄູນວ່າຊັ້ນ."

ເຮັງຄູນແຕ່ກີ້ທຽວໄປມາຄ້າຂາຍລະຫວ່າງ ເມືອງໄທ-ເມືອງລາວ ຈຶ່ງຮູ້ຈັກຄົນລາວທາງ ຫ້ວຍຊາຍຫຼາຍຜູ້ຫຼາຍຄົນ. ຕອນນີ້ ມີຄົນຕົກທຸກໄດ້ຍາກ ລາວກຍື່ນມືຊ່ອຍ, ເທົ່າທີ່ສອນໄຊໄດ້ຂ່າວ ຄົນລາວອົພຍົບຢູ່ຟາກນັ້ນ.

"ຝົນກຳລັງຊິຕົກແລ້ວ ຂ້ອຍລານ້າກ່ອນເນີ ມື້ຫນ້າຈຶ່ງຈະຕັ້ງໃຈມາຫຼິ້ນນຳໃຫມ່. ໄປ ເນີ..."

ສອນໄຊ ສັ່ງພວກເດັກນ້ອຍທີ່ກຳລັງດຶງມືແມ່ເຂົາເຂົ້າໄປໃນເຮືອນ ເພາະຍົດນ້ຳຝົນ ກຳລັງຕົກຖີ່ຂຶ້ນພ້ອມເມດກໍເລີ້ມໃຫຍ່ຂຶ້ນ ໆ.

ສອນໄຊທັງຍ່າງທັງແລ່ນຫນ້ອຍນຶ່ງກໍມາຮອດເຮືອນແລ້ວ, ເຂົ້າໄປໃນເຮືອນບໍ່ເຫັນໃຜ ຢູ່ ໃນບ້ານເລີຍແຕ່ກິ່ນຕົ້ມແຈ່ວປາ ສົ່ງກິ່ນຫອມມາຮອດຫນ້າບ້ານ.

"ເຮັດຫຍັງກິນຄືມາກິ່ນຫອມແທ້."

ສອນໄຊຫ້ວງອະນຸສອນນ້ອງສາວຄົນສຸດທ້ອງອາຍຸສິບສີ່ປີ, ກຳລັງປອກຫມາກແຕງໃສ່ຈານ ເພື່ອຫ້າງພາ ເຂົ້າ.

"ອີ່ແມ່ເຮັດຕົ້ມແຈ່ວປາຕອງ ທີ່ອີ່ພໍ່ຕຶກໄດ້ຕອນວັນທິດແລ້ວນີ້. ອ້າຍໄຊບໍ່ເຫັນອີພໍ່ແດ່ ນະ ? ບໍ່ທັນມີໃຜ ເອົາໂຄມລົງມາໄຕ້ເທື່ອ. ອ້າຍໄຊເອົາລົງມາໄຕ້ໃຫ້ແດ່ແມ໋, ຈັກຫນ່ອຍກໍ ຈະກິນເຂົ້າ ແລ້ວ." ອະນຸສອນວອນໃຫ້ອ້າຍຊ່ອຍໄຕ້ໂຄມມົງຊົງ.

"ນ້ຳມັນກາດຢູ່ຂ້າງຖັງເຂົ້າສານຫັ້ນເນີ ເຈົ້າ ເຫັນບໍ່ ? "

ທັງເວົ້າທັງຊີ້ມືໄປໃສ່ຖັງນ້ຳມັນກາດ໔໐ລິດ.

ໂຄມມົງຊົງ ແມ່ນໂຄມໃຊ້ມັນກາດ ກ່ອນຈະໄຕ້ມັນ ພວກເຮົາຈັບແລະຍ້າຍມັນຄ່ອຍໆ ເພື່ອບໍ່ໃຫ້ໃສ້ ຫຼື ຫຳມັນແຕກ, ຖ້າຫຳມັນແຕກ ຕ້ອງໄດ້ປ່ຽນມັນ ເພາະມັນເປັນຄືຂີ້ເຖົ່ານີ້ຊື່ໆ, ຈາກນັ້ນຕ້ອງເຮັດໃຫ້ຫຳມັນ ຮ້ອນກ່ອນ ໂດຍເອົາເຫຼົ້າໄຕ້ຖອກໃສ່ຖ້ວຍ ບ່ອນເພິ່ນເຮັດ ໄວ້ເພື່ອລົນມັນ. ແນ່ນອນເຮົາຕ້ອງຕື່ມ ນ້ຳມັນກາດໃຫ້ ພຽງພໍກ່ອນ. ມື້ນຶ່ງປະມານແຕ່ຫົກໂມງເຄິ່ງ ຈົນຮອດສິບໂມງແລງ ຕ້ອງໃຊ້ປະມານຂວດນ້ຳປາຂວດນຶ່ງ. ຫຼັງຈາກຫຳ ມັນຮ້ອນແລ້ວ ເຮົາກໍສູບມັນເພື່ອ ໃຫ້ມັນສີດນ້ຳມັນລ້ຽງໄຟທີ່ຫຳໂຄມໂດຍມັນສົ່ງແສງສວ່າງ ໄປທົ່ວ ຫ້ອງເຮືອນ.

"ຄຶດວ່າບໍ່ມີໃຜໄຕ້ໂຄມເທື່ອ" ສຽງທັງຫອບ ທັງຮ້ອງຂອງສອນທອງ ນ້ອງຊາຍຜູ້ຖັດສອນໄຊ ແລ່ນເຂົ້າມາໃນເຮືອນ ເພາະຕາມປົກກະຕິ ແມ່ນລາວ ຫຼື ພໍ່ເປັນຜູ້ໄຕ້ໂຄມ. ຜົມຫົວປຽກໄປຫມົດ.

"ຂ້ອຍໄປເຮັດສວນຢູ່ທົ່ງທ່າກັບພວກນາຕາສິນ ຜັກກາດຊອມ ອອກດອກທຸກຕົ້ນແລ້ວ ຈັກຫນ່ອຍກໍບໍ່ເປັນຕາກິນແລ້ວ. ບອກໃຫ້ປັນກັນກິນແຕ່ອາທິດແລ້ວ ອ້າຍຄູກໍບໍ່ເຫັນພ້ອມ. ນີ້ເດ່ຂ້ອຍເອົາມາຖົງນຶ່ງ ເອົາໄວ້ຫນຶ້ງກິນກັບແຈ່ວ ຫມາກກອກມື້ອື່ນ ເນີ ! ນຸສອນ." ສອນທອງຍື່ນຫໍ່ຜັກໃຫ້ນ້ອງສາວ.

"ຊິຟ້າວໄປອາບນ້ຳ ສະຫົວບຶດນຶ່ງກ່ອນ." ທັງເວົ້າທັງແລ່ນໄປທາງຫຼັງບ້ານ.

ຍາມຝົນຕົກແນວນີ້ ການອາບນໍ້າກໍສະດວກແດ່, ຄືບໍ່ຈໍາເປັນລົງໄປອາບຢູ່ທ່ານໍ້າຂອງ, ຮັງລິນ ໂຕ່ງໃຫ້ນໍ້າຝົນມາໃສ່ໄຫໄພບັກໃຫຍ່. ພວກເຮົາກໍພຽງຕັກອາບເທົ່ານັ້ນ. ຖ້າແມ່ນ ມື້ເວັນ ບາງເທື່ອພວກເຮົາມັກສວຍໂອກາດຊັກເຄື່ອງນໍ້າທັ່ງມາແຕ່ຮັງລິນ ຈັ່ງແມ່ນເພິ່ນສະນຸກ ໄລເຄື່ອງ, ບາດແດດອອກຈຶ່ງເອົາເຄື່ອງອອກຕາກ. ຖ້າຍາມແລ້ງ ຫ້ວຍຊາຍບໍ່ມີນໍ້າປະປາ ຈໍາເປັນ ຕ້ອງໄປຊື້ນໍ້າຢູ່ເຮືອນລູງທິດຄໍາດີ ເຊິ່ງລາວຂາຍໃຫ້ເປັນລໍ້, ແຕ່ລະລໍ້ ມີຖັງປີບນໍ້າມັນ ໔໐ລິດ ໑໐ຖັງກໍພໍດີເຕັມ ໄຫໄພໄຫນຶ່ງ ຫຼື ຟູຍນໍ້າມັນ ຟູຍນຶ່ງ.

ສະມັຍນຶ່ງ ເພິ່ນກໍພາກັນວາງທໍ່ແປບນໍ້າ ແຈກໄປຫຼາຍຫຼັງເຮືອນເຕີບ, ກໍດ້ວຍການຈັດຕັ້ງຈາກລູງທິດຄໍາດີນັ້ນເອງ ແຕ່ວ່າຍ້ອນບໍ່ສ້າງຕັ້ງໂດຍຫຼັກການນໍ້າປະປາ. ຄືເພິ່ນດູດເອົານໍ້າຂອງ ຂຶ້ນມາໃສ່ອ່າງ ຢູ່ເທິງຕີນວັດ ຂ້າງບ້ານລາວເອງ ບໍ່ມີການຕອງນໍ້າ ບໍ່ມີການໃສ່ຢາຂ້າເຊື້ອຈຸຣິນຊີ. ນໍ້າຂອງເຕັມໄປດ້ວຍດິນດາກ ແລະ ຂີ້ຊາຍ ບໍ່ດົນທໍ່ນໍ້າກໍຖືກຕັນ ດົນໄປດົນມາ ກໍເຊົາໄຊ້ ທຸກມື້ນີ້ ບັນຫາແຮງຍຸ້ງກວ່າເກົ່າເພາະ ເພິ່ນຕັດຊາຍແດນ ໄທ-ລາວ ນໍ້າມັນຂາດແຄນ, ມື້ທໍາອິດ ສອນໄຊເຫັນອະນຸສອນໄປຫາບນໍ້າມາຈາກທາງທ່ານໍ້າຂອງພູ້ນ. ພວກໄທບ້ານຕາກແດດ ຫຼື ຊາວບ້ານ ຄອງໃນເຊິ່ງຢູ່ໄກນໍ້າຂອງ ເຂົາເຈົ້າກໍພາກັນ ຂຸດນໍ້າສ້າງໃຊ້.

ທຸກຄົນໃນຄອບຄົວ ນັ່ງໂຮມກັນອ້ອມພາເຂົ້າ ແບບພ້ອມຫນ້າພ້ອມຕາກັນດັ່ງນີ້ກໍມີ ຫນ້ອຍເທື່ອ ຫຼັງຈາກສອນໄຊໄດ້ຈາກຄອບຄົວ ໄປຮຽນຢູ່ວຽງຈັນ. ທັ້ງນີ້ກໍເນື່ອງຈາກວ່າ ໃນສມັຍກ່ອນນັ້ນ ຢູ່ຫ້ວຍຊາຍຍັງບໍ່ມີໂຮງຮຽນມັທຍົມເທື່ອ, ນັກຮຽນເວລາຮຽນຈົບຊັ້ນປະຖົມ ແລ້ວຕ້ອງຂໍເສັງເຂົ້າວິທະຍາລັຍ ຫຼື ໂຮງຮຽນໂອບຣົມຄູ ທີ່ຫຼວງພະບາງ ຫຼື ໂຮງຮຽນການຊ່າງ ປາກປ່າສັກທີ່ວຽງຈັນ. ແຕ່ລະປີກໍຈະມີນັກຮຽນຈາກຫ້ວຍຊາຍ ປີລະປະມານ ສິບຫ້າຫາ ຊາວຄົນທີ່ມີໂຊກເສັງໄດ້ ແລະ ມີໂອກາດໄປຮຽນຕໍ່ທີ່ເມືອງໃຫຍ່. ສອນໄຊແມ່ນນັກຮຽນຊຸດສຸດ ທ້າຍທີ່ຖືກສົ່ງ ໃຫ້ໄປຮຽນຢູ່ຫຼວງ ພະບາງ ຫຼື ວຽງຈັນ. ຈາກນັ້ນມາ ເພິ່ນກໍສ້າງໂຮງຮຽນມັທຍົມຫ້ວຍຊາຍຂຶ້ນ ແລະ ຕໍ່ມາກໍມີໂຮງຮຽນໂອບຣົມຄູສອງປີ ຕື່ມນໍາ. ຈຶ່ງເຮັດໃຫ້ຄອບຄົວຂອງ ສອນໄຊ ແລະ ຄົນຫ້ວຍຊາຍທົ່ວໄປບໍ່ແຕກຊະ ນະໂມເນື່ອງຈາກຈໍາເປັນ ຕ້ອງພາກ ຈາກຄອບຄົວ ໄປຮຽນຕໍ່ທີ່ເມືອງໃຫຍ່ ແຕ່ອາຍຸສິບສອງ ຫຼື ສິບສາມປີ. ເວລາສອນໄຊກັບມາຍາມພໍ່ແມ່ທີ່ຫ້ວຍຊາຍ ພວກນ້ອງໆສ່ວນໃຫຍ່ ເຂົາກໍຖືໂອ ກາດໄປຫຼິ້ນ ຫຼວງພະບາງ ໄປຍາມ ພໍ່ປູ່ແມ່ຍ່າ ລູງປ້າອາວອາ, ຕາງຫຼິ້ນບຸນເດືອນເກົ້າ ຊ່ວງເຮືອ ໂລະລາດ, ສວນທາງ ກັນກັບອ້າຍໃຫຍ່ ຈຶ່ງບໍ່ຄ່ອຍ ມີໂອກາດໄດ້ກິນເຂົ້າຮ່ວມພາ ກິນປາຮ່ວມຂ້ອງກັນ ຢ່າງນີ້. ປີນີ້ສະຖານະການບ້ານ ເມືອງມີການປ່ຽນແປງ ທັງວຸ້ນວາຍຕື່ມອີກຈຶ່ງບໍ່ມີການ ໄປທ່ຽວຫຼິ້ນຄືທຸກປີ.

"ອ້າຍຄູລາວສັ່ງມາບອກ ນຸສອນ ວ່າແລງນີ້ບໍ່ມີການຝຶກຟ້ອນ" ສອນທອງບອກອະນຸ ສອນ, "ມື້ອື່ນ ພວກຂ້ອຍຈະໄດ້ໄປເຮັດນາສາມັກຄີ ທາງບ້ານຫ້ວຍກາງ ເພາະວ່າເຂົ້າ ເຂົ້າແກ່ຫຼາຍແລ້ວ, ບໍ່ຕ້ອງຖ້າຂ້ອຍຕອນເຊົ້າ ທ່ຽງເນີ." ສອນທອງຕື່ມ.

ສອນທອງຮູ້ສຶກວ່າເປັນຄົນທີ່ຫ້າວຫານ ແລະ ເອົາວຽກເອົາການກັບການຈັດຕັ້ງໃຫມ່ ຫຼາຍກວ່າຫມູ່ ໃນຄອບຄົວ. ແມ່ນແຕ່ອະນຸສອນເອງເຖິງຈະໄປຫັດຟ້ອນນຳ ພວກນາຕສິນກໍ ບໍ່ເຫັນລາວ ເອົາເຣື່ອງພວກນາຕສິນ ມາໂອ້ລົມກັນຢູ່ໃນເຮືອນຈັກເທື່ອ.

"ທອງເປັນແນວໃດວຽກບ້ານການເມືອງທາງພີ້ ຕັ້ງແຕ່ອ້າຍມາຮອດພີ້ກໍບໍ່ມີໂອກາດໄດ້ ລົມໂຕຈັກເທື່ອ." ສອນໄຊ ສໍຖາມນ້ອງຊາຍ.

"ຕັ້ງແຕ່ພວກເຮົາມີການໂຄນລົ້ມລະບອບເກົ່າມາ, ກໍມີການຕັດເຂດຊາຍແດນ ໄທ-ລາວ ຜູ້ຄົນຢູ່ພີ້ຮູ້ສຶກມີຄວາມລຳບາກຫຼາຍ. ເພາະແຕ່ກີ້ ຄືເຈົ້າຮູ້ຫັ້ນເຂົ້າພຽງເມັດ ເຫັດພຽງຫົວ ພວກເຮົາກໄດ້ຊື້ໄທກິນ ເວລາເຂົາຕັດຊາຍແດນແນວນີ້ ພວກເຮົາຈິ່ງມີຫົວໃຈ ໄປປູກຜັກ ລ້ຽງໄກ່ກິນ ແນວນີ້ຄົນລາວເຮົາຈິ່ງຈະມີຫົວໃຈ ຊ່າງສ້າງ ຊ່າງຮັກສາບ້ານເມືອງ" ທຸກຄົນມິດນັ່ງຟັງ ຄຳອະທິບາຍຂອງສອນທອງ.

"ພວກທີ່ຖືກສົ່ງໄປສຳມະນາທາງນ້ຳທາໂຕກໄດ້ຂ່າວເຂົາເຈົ້າແດ່ບໍ່ ?" ສອນໄຊຖາມ ສວນໄປ.

"ຕາມຍິນຂ່າວກໍບໍ່ມີຫຍັງຜິດທຳມະດາເດ່... ຖ້າພວກນີ້ບໍ່ຖືກສົ່ງໄປຮ່ຳຮຽນການເມືອງ ໃຫ້ເຂົ້າໃຈເຫດການໃຫ້ດີຂຶ້ນ ຂ້ອຍຢ້ານ ປານນີ້ຜູ້ຄົນແຮງຈະເຕັ້ນໂຕນ ໂຍນຫນີໄປຫຼາຍ ກວ່ານີ້. ເຈົ້າລອງຫຼຽວເບິ່ງເຂົາເຈົ້າດູ່ ພວກທີ່ອົພຍົບໄປຊຽງຂອງ ຈັ່ງໃດພາກັນຫນີ ປະບ້ານປະເຮືອນໄປແນວນີ້. ໄປພູ້ນ ເຂົາວ່າຫນີໄປຢູ່ເມືອງເສຣີ, ເສຣີຫ່າມັນຫຍັງເຂົາໃຫ້ນອນຢູ່ຄ້າຍອົພຍົບ ລ້ອມຮົ້ວຫນາມຫມາກຈັບ ໄປໃສມາໃສບໍ່ໄດ້. ນັ້ນບໍ່ຫນີໄປຫາຄວາມເສຣີ..." ສອນ ທອງເວົ້າຢ່າງເອົາຈິງເອົາຈັງ.

"ພວກອ້າຍໄດ້ຂ່າວພວກຫນີໄປ ສ່ວນໃຫຍ່ກໍແມ່ນຄົນທີ່ມີພີ່ມີນ້ອງຢູ່ທາງເມືອງໄທພູ້ນ ຫມົດຕວ່າ"

"ບໍ່ໄດ໋ ອ້າຍໄຊຕາມຂ້ອຍຮູ້ຂ່າວ ຈັກຄົນມົ້ງ ຄົນປ້າວ ຄົນຂ້າມຸ ໄທຫ້ວຍຊາຍເຮົາ ແມ້ແຕ່ ຄົນຫຼວງພະບາງ ກໍພາກັນມາຫນີຂ້າມຢູ່ພີ້ ສ່ວນໃຫຍ່ເຂົາກໍນາບ ເຂົ້າໄປນອນຢູ່ສູນອົພຍົບຫມົດ. ມີຈັກຄອບຄົວນຶ່ງ ທີ່ສາມາດ ໄປຕັ້ງຫຼັກຖານຢູ່ຊຽງຮາຍພູ້ນ. ກໍຄອບຄົວ ດອກເກດມະນີຫັ້ນເດ່ ໄດ້ຍິນວ່າ ໄປເປັນແມ່ຄ້າຕາຫວານ ຢູ່ຊຽງຮາຍພູ້ນ. ທຳອິດຂ້ອຍກໍບໍ່ຄິດວ່າ ຄອບຄົວລາວຈະຫນີເລີຍ ເພາະພໍ່ລາວເປັນໄທບ້ານດຽວ ກັນກັບທ່ານປະທານແຂວງໃດ໋. ດອກເກດມະນີລາວກໍເປັນຮອດຮອງຫົວ ຫນ້າຊາວຫນຸ່ມລາວ ຂ້ອຍວ່າຖ້າລາວມີສິດ ເລືອກໄດ້ລາວຄົງ ຈະບໍ່ຫນີດອກ ແຕ່ນີ້ຄືຈະແມ່ນພໍ່ແມ່ລາວ ເປັນຜູ້ກົດດັນໃຫ້ລາວໄປນຳ ຊື່ໆ." ສອນທອງຈໍ້າ ເຂົ້າໃສ່ປາກ ຫຼຽວເບິ່ງຫນ້າສອນໄຊ "ແລ້ວເຈົ້າບໍ່ ໄດ້ຂ່າວລາວ ແດ່ບໍ່ ?"

ສອນໄຊແກວ່ງຫົວ

"ບໍ່ອ້າຍບໍ່ໄດ້ຂ່າວລາວເລີຍ ຫວ່າງກີ້ຍ່າງກາຍມາທາງຫນ້າບ້ານ ນ້າວຽງ ລາວກໍເວົ້າໃຫ້ ຟັງ ຄືໂຕເວົ້າຫວ່າງກີ້ນີ້ແລ້ວ ວ່າລາວໄປຂາຍປີ້ມຢູ່ຮ້ານເຮັ້ງຄູນ"

ຫົວໃຈຂອງສອນໄຊຮູ້ສຶກຄືວ່າຕີບເຂົ້າເວລາເວົ້າເຖິງດອກເກດມະນີຂຶ້ນມາ ຈົນຄືວ່າຈະ ຫາຍໃຈບໍ່ອອກ. ຕອນຊາບຂ່າວແຕ່ທຳອິດ ວ່າດອກເກດມະນີ ຫນີຂ້າມຝັ່ງໄທແລ້ວ ສອນໄຊຄຶດຢາກ ໃຈຮ້າຍຊ້ຳ ວ່າຈະຫນີແທ້ ໆ ກໍ ບໍ່ຂ່າວໃຫ້ຮູ້ຈັກດີ້ ອີກດ້ານນຶ່ງ ສອນໄຊກໍຄືຊາວຫນຸ່ມທົ່ວໄປ ຕ້ອງປາກເຫັນບ້ານເມືອງ ຈະເຣີນຮຸ່ງເຮືອງ ປາສຈາກເສິກເສືອ. ເວລາບ້ານເມືອງຊິງຈະເຂົ້າຂີ່ເຂົ້າຂາງ ແລ້ວຄົນລາວມາພາກັນ ຫນີຂ້າມໄປຝັ່ງໄທຢ່າງມາກມາຍ ແທນທີ່ຈະພາກັນຊ່ອຍເປັນໄມ້ ເປັນມື ສ້າງບ້ານສ້າງເມືອງຮ່ວມກັນ. ແຕ່ໃນລະຍະຫຼັງໆມາ ສອນໄຊກໍຮູ້ສຶກວ່າຈິດໃຈ ຊິງ ບໍ່ເຂັ້ມແຂງແທ້ ແລະມີບັນຫາກັບຫມູ່ຄູ່ທີ່ມີຫົວກ້າວຫນ້າກວ່າ. ໃຈນຶ່ງສອນໄຊກໍຖາມຕົນ ເອງວ່າແມ່ນຍ້ອນ ຕົວເອງມີ ຄວາມອິດສາຫມູ່ບໍ່ ? ຫຼືວ່າຕົນເອງ ຖືກຄວາມຍຸຍົງຈາກຄວາມ ໂຄສະນາຂອງພວກປະຕິ ການແລ້ວບໍ່ ?

ສອນໄຊບໍ່ໄດ້ຍິນຫຍັງແລ້ວ ສິ່ງທີ່ກຳລັງເພິ່ນກຳລັງໂອ້ລົມກັນໃນພາເຂົ້າ ຄວາມຄຶດຂອງ ສອນໄຊກຳລັງເພີ້ຝັນໄປທາງອື່ນແລ້ວ. ສິ່ງທີ່ສອນໄຊມີຢູ່ໃນໃຈ ກໍບໍ່ກ້າລົມອອກມາຢ່າງເຕັມປາກ ເພາະຮູ້ສຶກວ່ານ້ອງຊາຍຂອງຕົນຫົວກ້າວຫນ້າຫຼາຍ ຈົນຄືຈະບໍ່ສາມາດເຂົ້າໃຈຕົນເອງໄດ້. ທັງປະກອບມີຄວາມຮູ້ສຶກ ຢ້ານກົວສອນທອງມາເປັນເທື່ອ. ເພາະການຟ້ອງຮ້ອງຜູ້ຄວາມ ຄິດປະຕິການຕໍ່ອົງການການເມືອງ ມີແຕ່ຈະສ້າງຜົນດີໃຫ້ແກ່ຂັ້ນເທິງ ໂດຍເພິ່ນ ໃຫ້ຄວາມໄວ້ ເນື້ອເຊື່ອໃຈຜູ້ຟ້ອງຫຼາຍຂຶ້ນ ແລະ ດູວ່າຂັ້ນເທິງ ເພິ່ນກໍເຫັນຊອບ ການປະພຶດຟ້ອງຄົນອື່ນເຊັ່ນນີ້.

ກິນເຂົ້າອີ່ມສອນໄຊກໍຍໍມືໄຫວ້ ແລ້ວກໍອອກພາເຂົ້າໄປ. ແລ້ວຢ່າງໄປດື່ມນ້ຳເຊິ່ງທຸກເຊົ້າ ແມ່ນແມ່ເປັນຜູ້ຕົ້ມໃສ່ຫົວສີໂຄ ແລ້ວເອົາມາຖອກໃສ່ໝໍ້ອຸ່ມໂລມີນຽມ ຊື້ມາແຕ່ໄທພູ້ນ. ທາງລຸ່ມ ຂອງໝໍ້ອຸ່ມມີໄລ ບິດຄືຫົວນ້ຳກອກ ສອນໄຊບິດນ້ຳໃສ່ເຕັມຈອກແລ້ວກໍຢືນດື່ມທັງ ຫຼຽວອອກນອກປ່ອງຢ້ຽມ ຝົນກຳລັງຕົກລັ່ງທັ່ງ ເຫລິງມາຫົນທາງ ບໍ່ມີຄົນທຽວແລ້ວເນື່ອງຈາກ ເພິ່ນຫ້າມໃຫ້ອອກບ້ານ ຫຼັງຈາກແປດໂມງແລງ. ແຕ່ແມ່ຂອງໄຊເຄີຍຊັບ ໃສ່ຫູສອນໄຊ ແຕ່ມື້ທຳອິດວ່າ

"ເຮືອນເຮົາ ບາງແມ່ສັງເກດເຫັນມີເງົາຄົນມາຈອບເບິ່ງເຮົາຢູ່ໃນເຮືອນ ແຕ່ບໍ່ຮູ້ແມ່ນໃຜ ພວກເຮົາກໍທຳທ່າບໍ່ຮູ້ບໍ່ເຫັນມັນໄປ ຄັນຈະເອົາໄຟສາຍແຍງເບິ່ງກໍບໍ່ກ້າ."

ທຳມະດາ ພໍ່ຂອງສອນໄຊກໍຕ້ອງໄດ້ໄປສຳມະນາທີ່ຫຼວງນ້ຳທາ ຄືໝູ່ທຸກຄົນທີ່ເຄີຍເປັນ ຫົວໜ້າຫ້ອງການຂອງພວກວຽງຈັນເກົ່າ. ແຕ່ເພິ່ນບໍ່ໄດ້ໄປຍ້ອນເພິ່ນ ເປັນຫົວໜ້າຝ່າຍໂທຣະຄົມ ມີແຕ່ເພິ່ນຄົນດຽວທີ່ຊ່າງໃຊ້ ແລະ ຊ່າງແປງເຄື່ອງສົ່ງວິທະຍຸ. ທາງປະທານແຂວງ ຈຶ່ງອະນຸຍາດໃຫ້ ເພິ່ນຢູ່ຫ້ວຍຊາຍ ແລະ ເຮັດວຽກຊ່ອຍກ່ອນ.

ທາງຂັ້ນເທິ່ງ ເພິ່ນຄືຈະມີການຖົກຖຽງກັນ ແລະ ມີການສື້ນຊອມ ເບິ່ງພຶຕິການຂອງ ຄອບຄົວສອນໄຊ. ສ່ວນແມ່ສອນໄຊນັ້ນ ຢ້ານຈະມີຄົນຊອກຫາເຣື່ອງໃສ່ພໍ່ ແລ້ວມີການຈັບກຸມກັນໄປ ແບບບໍ່ຮູ້ຫົວຕີນປາຍນອນ ດັ່ງຂ່າວເລົ່າລືກັນແບບບໍ່ຂາດປາກ. ພ້ອມທັງຂ່າວ ການໜີຂ້າມຝັ່ງຂອງຄົນ ຫ້ວຍຊາຍກໍມີເກືອບທຸກມື້ ແມ່ນແຕ່ລູງເສັ່ງເພິ່ນເປັນຮອດຮອງ ປະທານແຂວງກໍຍັງພາກັນໜີໄປ ທັງຄອບຄົວໂດຍປະປະຕູເຮືອນເປີດ ໄວ້ຄືມີຄົນຢູ່ ຈົນຮອດເຈັດແປດໂມງແລງພີ້ໄທບ້ານຈຶ່ງຮູ້ວ່າ ທ່ານຮອງປະທານແຂວງ ແລະ ຄອບຄົວພາກັນໜີໄປແລ້ວ.

ໃນສມັຍກ່ອນ ຄ່ຳມາເຊັ່ນນີ້ ພວກຊາຍ ຍິງສາວ ກໍພາກັນອອກໄປທ່ຽວ ຢ່າງຫຼິ້ນເບິ່ງ ຣູບເງົາ ຫຼື ຊີເນມາຢູ່ໂຮງຊີເນຂອງ ເອື້ອຍລ່ວນທາງຫົວບ້ານ, ຖ້າໜັງບໍ່ຊົງຊີມ່ວນກໍພາກັນຍ່າງ ທ່ຽວກິນ ອາກາດ ຫຼື ຊອກລົມສາວ.
ຖ້າຝົນຕົກຄືມື້ນີ້ ຊາວ ໜຸ່ມສາວກໍຊວນກັນຕົ້ມເຂົ້າປຽກ ຊຸມແຊວຢູ່ໃນເຮືອນ ພວກສລອກກອກ ກໍຊອກເອົາກັນຊາມາລັກສູບພ້ອມ ບ້າງກໍ ເອົາບັ້ງມາພ້ອມ ບ້າງກໍເອົາມວນກອກຢາ ອາແດງມາຖູມເອົາຢາອອກ ແລ້ວເອົາກັນຊາຢັດເຂົ້າແທນ ແລ້ວພາກັນສູບຫຼິ້ນ ສູບມ່ວນ.

ການສູບກັນຊາ ມັນບໍ່ແມ່ນການສູບຫຼິ້ນ ຫຼື ສູບມ່ວນ, ບາງຄົນກໍຕິດມັນໄປແບບ ງອມແງມ; ທາງຜູ້ໃຫຍ່ ກະໂລແນນຜາຍ ແລະ ເຈົ້ານາຍໄດ້ສັ່ງໃຫ້ຕຳຣວດ ແລະ ທະຫານທີ່ພົບ ພໍ້ ພວກຊາວໜຸ່ມກຳລັງສູບ ໃຫ້ຈັບໄປໃຫ້ເພິ່ນ.

ພວກຫນຸ່ມນ້ອຍກໍປາກຈະທ້າທາຍ ແລະ ທົດລອງເດດກັບຜູ້ໃຫຍ່ ພາກັນລັກສູບ ທັງຢ້ານເພິ່ນຈັບນຳອີກ ຈົນຮອດທຸກມື້ນີ້ກໍບໍ່ເຫັນ ໄດ້ຂ່າວວ່າມີຜູ້ຖືກຈັບແມ່ນແຕ່ຄົນດຽວ. ຄວາມຈິງເພິ່ນ ກໍຄົງຈະປາກໃຫ້ຊາວຫນຸ່ມ ໄທຫ້ວຍຊາຍເຊົາມະເລເສເພນຳຂອງເຄື່ອງມຶນມົວຊື່ໆດອກ ຖ້າຖືກຈັບໄປແທ້ ຜູ້ເປັນພໍ່ແມ່ກຶ້ຂຶ້ນໄປຫາເພິ່ນກໍທຳ ທ່າດ່າຫົວ ແລ້ວກໍປ່ອຍອອກມາເທົ່ານັ້ນເອງ.

ທ້າຍສຸດ ກໍພາກັນອັດປ່ອງຢ້ຽມ ແລະ ປະຕູແລ້ວພາກັນຊອກເຂົ້າຫຼັບນອນ.

(ເຊີນອ່ານຕໍ່ ໃນຕົ້ນເດືອນມີນາ ໒໐໐໐, ຍິນດີຕ້ອນຮັບຄວາມຕິຊົມ)